ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກອຸດສາຫະກໍາ ແລະ ການຄ້າ

(ຄະນະກໍາມະການປະມູນຂາຍໄມ້ຍຶດຂັ້ນແຂວງ)

ເລກທີ..357../ອຄ.ອປ

ອັດຕະປື, ວັນທີ.14.ພຶດສະພາ.2019

## ແຈ້ງການປະມູນ

ເຖິງ : ຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສໍາເລັດຮູບ ພາຍໃນແຂວງ ແລະຕ່າງແຂວງທົ່ວປະເທດ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ວິກ ແລະໄມ້ກະຖິນນາລົງ (ໄມ້ຢືນຕົ້ນ) ທີ່ຂຸດຄົ້ນອອກຈາກເນື້ອທີ່ປູກໄມ້ວິກເຂດເມືອງ ຊານໄຊ ແລະໄຊເສດຖາ ຈານວນ ບໍລິມາດ : 211.053,910 ມ3 = 253.264,692 ໂຕນ.

- ອີງຕາມ ຄໍາສັ່ງ ເລກທີ 15/ນຍ, ລົງວັນທີ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກໍາ ແລະການຄ້າ ສະບັບເລກທີ 0918/ອຄ.ຈພງ, ລົງວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກໍາ - ການຄ້າແຂວງ ແລະນະຄອນຫຼວງ ວຽງຈັນ.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1258/ຈຂ.ອປ, ລົງວັນທີ 19/12/2016. ວ່າດ້ວຍການແຕ່ງຕັ້ງຄະນະ ກໍາມະການປະມູນຂາຍໄມ້ ສົກປີ 2016 - 2017.
- ອີງຕາມ ບົດລາຍງານຂອງພະແນກກະສິກໍາ ແລະປ່າໄມ້ແຂວງ ສະບັບເລກທີ 241/ກປຂ, ລົງວັນທີ 13/05/2019.

ຄະນະກໍາມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ( ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງອັດຕະປື ) ຂໍຖືເປັນ ກຽດແຈ້ງມາຍັງບັນດາທ່ານຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສໍາເລັດຮູບ ພາຍໃນແຂວງແລະຕ່າງ ແຂວງທົ່ວປະເທດ ເພື່ອເຂົ້າປະມູນຊື້ໄມ້ວິກ ແລະໄມ້ກະຖິນນາລົງ (ໄມ້ຢືນຕົ້ນ) ທີ່ຂຸດຄົ້ນອອກຈາກເນື້ອທີ່ປູກໄມ້ວິກເຂດ ເມືອງຊານໄຊ ແລະໄຊເສດຖາ ຂອງແຂວງອັດຕະປື ເຊິ່ງມີລາຍລະອຽດ ດັ່ງນີ້ :

I. ໄມ້ທີ່ຈະປະມູນຂາຍ ມີຈໍານວນທັງໝົດ 6.138.417 ຕົ້ນ, ບໍລິມາດ : 211.053,910 ມ3 = 253.264,692 ໂຕນ ຕາມບັນຊີສໍາຫຼວດຂອງພະແນກກະສິກໍາ ແລະປ່າໄມ້ແຂວງ ໃນນັ້ນມີ :

- ໄມ້ວິກ ຢືນຕົ້ນ ມີ 2.479.167 ຕົ້ນ, ບໍລິມາດ 72.905,152 ມ3 = 87.486,183 ໂຕນ.
- ໄມ້ກະຖິນນາລົງ ຢືນຕົ້ນ ມີ 3.659.250 ຕົ້ນ, ບໍລິມາດ 138.148,758 ມ3 = 165.778,509 ໂຕນ.

II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ວິກ ຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງ ແຂວງ ( ໃຫ້ສໍາເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສໍາເລັດຮູບ ໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.
2. ຕ້ອງສາມາດຜະລິດເປັນຜະລິດຕະພັນສໍາເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດ ຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.
3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອໍານວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງ ມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 15 ວັນລັດຖະການ (ນັບແຕ່ວັນທີ 14/5/19 – 27/5/19 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 28 ພຶດສະພາ 2019.
- ສະຖານທີ່ : ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງ ວັນທີ 28/05/ 2019, ຈິ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື, ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.
( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )

ຄຳວັນ ຈັນທະໂຄດ
Khamvan CHANTHAKHOT

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456